# ນະໂຍບາຍການລັດຫາຢາງທຳມະຊາດແບບຍືນຍົງ ຂອງຄອນຕິເນັນເທິລ

ຮັນໂນເວີ, 16.10.2018

## 1. ພາກສະເໜີ

### 1.1 ຄວາມຍືນຍົງຢູ່ທີ່ຄອນຕິເນັນເທິລ

ດັ່ງທີ່ໄດ້ອະທິບາຍໄວ້ໃນວິໄສທັດບໍລິສັດ ແລະ ພັນທະກິດ ຂອງພວກເຮົາ, ຄອນຕິເນັນເທິລ ຣັບເບີ ກຣູບ (Continental's Rubber Group) ຕະໜັກເຖິງບົດບາດໃນສັງຄົມ ແລະ ຄວາມຮັບຜິດຊອບຕໍ່ສັງຄົມ. ເປົ້າໝາຍຂອງພວກເຮົາຄືການປະກອບສ່ວນຢ່າງຕັ້ງໜ້າເຂົ້າໃນ
ການພັດທະນາແບບຍືນຍົງ. ພວກເຮົາເຊື່ອຖືໃນ ຄ່ານິຍົມບໍລິສັດ ຂອງພວກເຮົາ "ຄວາມໄວ້ເນື້ອເຊື່ອໃຈ, ຄວາມໄຝ່ຝັນທີ່ຈະຜູ້ຊະນະ, ອິດສະຫຼະພາບທີ່ຈະເຮັດ ແລະ ເພື່ອກັນ ແລະ ກັນ" ເຮັດໃຫ້ພວກເຮົາສ້າງຄ່ານິຍົມທີ່ຍືນຍົງ ແກ່ຜູ້ມີສ່ວນຮ່ວມ ທັງໝົດ ຂອງພວກເຮົາ ແລະ ສັງຄົມ
ບ່ອນທີ່ພວກເຮົາດໍາເນີນທຸລະກິດ.
ສໍາລັບ ຄອນຕິເນັນເທິລ, ການປະຕິບັດາມທິດຍືນຍົງ ແລະ ມີຄວາມຮັບຜິດຊອບປະກອບມີ ການເຄົາລົບລະບຽບກົດໝາຍ, ການອະນຸລັກຊັບພະຍາກອນ ແລະ ການສົ່ງເສີມການປົກປ້ອງດິນຟ້າອາກາດ ແລະ ສິ່ງແວດລ້ອມ ພ້ອມທັງຕອບສະໜອງຄວາມຮັບຜິດຊອບ ຂອງພວກເຮົາທີ່ມີຕໍ່ພະນັກງານ, ຄູ່ຮ່ວມທຸລະກິດ, ຜູ້ສະໜອງ, ລູກຄ້າ ແລະ ສັງຄົມ ຂອງພວກເຮົາ. ພວກເຮົາໃຫ້ການສະໜັບສະໜູນຢ່າງແຮງກ້າຕໍ່ວິໄສທັດຕາມເປົ້າໝາຍການພັດທະນາທີ່ຍືນຍົງ ຂອງອົງການສະຫະປະຊາຊາດ. ດັ່ງນັ້ນ, ຄອນຕິເນັນເທິລ ຈຶ່ງເປັນຜູ້ມີສ່ວນຮ່ວມ ຂອງສະມາຄົມເຄືອຂ່າຍໂລກ ຂອງອົງການສະຫະປະຊາຊາດ ຫຼື Global Compact ແລະ ສະໜັບສະໜູນສິບຫຼັກການດ້ານສິດທິມະນຸດ, ມາດຕະຖານແຮງງານ, ການປົກປ້ອງສິ່ງແວດລ້ອມ ແລະ ການຕໍ່ຕ້ານການສໍ້ລາດບັງຫຼວງ. ພວກເຮົາໄດ້ຕີພິມເອກະສານທີ່ກ່ຽວຂ້ອງທີ່ກໍານົດພື້ນຖານການປະຕິສໍາພັນທາງທຸລະກິດ ທັງໝົດ ຂອງພວກເຮົາ ລວມທັງ, ແຕ່ບໍ່ຈໍາກັດພຽງແຕ່ ຫຼັກການປະຕິບັດ ຂອງຄູ່ຮ່ວມທາງທຸລະກິດ(BPCoC), ຄູ່ມືເງື່ອນໄຂ ຂອງຜູ້ສະໜອງ. ຈິດວິນຍານ ແລະ ຈັນຍາບັນອົງກອນ ຂອງຄອນຕິເນັນເທິລ (ເຊັ່ນ: ການມີສິລະທໍາ, ຄວາມຊື່ສັດ ແລະ ການປະຕິບັດພັນທະກົດໝາຍ) ໄດ້ຖືກຮັບການພິສູດເປັນລາຍລັກອັກສອນ ເຊັ່ນວ່າ ໄວ້ໃນ ຫຼັກປະຕິບັດ, ຫຼັກພື້ນຖານ, ນະໂຍບາຍ ESH ແລະ ຫຼັກການ ການຄຸ້ມຄອງບໍລິຫານກິດຈະການ .
ຢູ່ທີ່ ຄອນຕິເນັນເທິລ ພວກເຮົາເຊື່ອຢ່າງແຮງກ້າວ່າ ການດໍາເນີນທຸລະກິດແບບຍືນຍົງເຮັດໃຫ້ຄວາມສາມາດໃນການປະດິດຄິດສ້າງ ຂອງພວກເຮົາລໍ້າໜ້າ ແລະ ຕອບສະໜອງຄວາມຕ້ອງການ ຂອງອະນາຄົດ, ແລະ ດັ່ງນັ້ນ ຈຶ່ງພວກເຂົາເພີ່ມຕື່ມຄ່ານິຍົມເຂົ້າໃນບໍລິສັດ ແລະ ສັງຄົມ.

### 1.2 ບົດບາດ ຂອງຄອນຕິເນັນເທິລໃນການຈັດສັນແຫຼ່ງຢາາທໍາມະຊາດ

ການປູກຝັງ, ການເກັບກ່ຽວ ແລະ ການແປຍາງທໍາມະຊາດ ((NR) ສໜອງໃຫ້ແກ່ຜູ້ມີສ່ວນກ່ຽວຂ້ອງທັງໝົດຕາມຕ່ອງໂສ້ມູນຄ່າພ້ອມລາຍຮັບປົກກະຕິ (ເບິ່ງພາກທີ 3). ໃນສະພາບການເຕີບໂຕຈິງ ຂອງຄວາມຕ້ອງການ ຂອງໂລກ, ສໍາຄັນແມ່ນການສຸມໃສ່ຄວາມຍືນຍົງໃນທົ່ວຕ່ອງໂສ້ມູນຄ່າທັງໝົດເພື່ອກໍາຈັດຄວາມສ່ຽງ ແລະ ຜົນກະທົບດ້ານລົບຕໍ່ພະນັກງານກໍາມະກອນ, ຊຸມຊົນຕ່າງໆ, ປ່າໄມ້, ຊີວະນາງພັນ ແລະ ທີ່ດິນກະສິກໍາ. ການຮັບຮູ້ຄວາມຮັບຜິດຊອບ ຂອງພວກເຮົາ
ຄອນຕິເນັນເທິລມຸ່ງເນັ້ນທີ່ຈະເປັນຜູ້ປະກອບສ່ວນທີ່ຫ້າວຫັນ ແລະ ມີຄວາມຮັບຜິດຊອບໃນການສົ່ງເສີມຢາງທາງມະຊາດແບບຍືນຍົງ (SNR).
ຣັບເບີ ກຣູບ ຂອງຄອນຕິເນັນເທິລແມ່ນເປັນຜູ້ບໍລິໂພກຢາງທໍາມະຊາດລາຍໃຫຍ່. ໂດຍທົ່ວໄປແລ້ວ ເຖິງແມ່ນວ່າພວກເຮົາບໍ່ໄດ້ມີການເຂົ້າເຖິງຊຸມຊົນກະສິກໍາໂດຍກົງ, ແຕ່ພວກເຮົາຕັ້ງໃຈທີ່ຈະພັດທະນາ, ສົ່ງເສີມ ແລະ ຈັດຕັ້ງປະຕິບັດການຈັດຫາແຫຼ່ງຢາງທໍາມະຊາດແບບຍືນຍົງ ແລະ ມີຄວາມຮັບຜິດຊອບ ຕາມຕ່ອງໂສ້ມູນຄ່າ. ນະໂຍບາຍນີ້ແມ່ນແນໃສ່ເພື່ອສະໜອງໂຄງຮ່າງຄວາມຮັບຜິດຊອບທີ່ຈະແຈ້ງພາຍໃນຕ່ອງໂສ້ການສະໜອງຢາງທໍາມະຊາດ
ຂອງຄອນຕິເນັນເທິລ ສໍາລັບຄູ່ຮ່ວມ ແລະ ຜູ້ມີສ່ວນກ່ຽວຂ້ອງ ຂອງຕ່ອງໂສ້ມູນຄ່າ. ດັ່ງນັ້ນ, ມັນໄດ້ສະແດງຈຸດເລີ່ມຕົ້ນສໍາລັບການເດີນທາງຮ່ວມກັນໄປສູ່ຕ່ອງໂສ້ຢາງທໍາມະຊາດແບບຍືນຍົງ.

## 2. ຄວາມຕັ້ງໃຈໃນຢາງທໍາມະຊາດແບບຍືນຍົງ (SNR) ຂອງຄອນຕິເນັນເທິລ.

ພວກເຮົາຕັ້ງໃຈທີ່ຈະປັບປຸງອົງຄວາມຮູ້ ຂອງພວກເຮົາກ່ຽວກັບຂົງເຂດການພັດທະນາຢາງທໍາມະຊາດແບບຍືນຍົງຢ່າງຕໍ່ເນື່ອງ, ຜັນຂະຫຍາຍໄປສູ່ແນວທາງແກ້ໄຂ, ຫຼຸດຜ່ອນຄວາມສ່ຽງ ແລະ ຊຸກຍູ້ນະວັດຕະກໍາ ຂອງຜູ້ສະໜອງ. ຢູ່ທີ່ ຄອນຕິເນັນເທິລ ພວກເຮົາໄດ້ກໍານົດ
ຫົວຂົງເຂດການພັດທະນາ

### 2.1 ເອົາຜູ້ສະໜອງ ແລະ ຊາວກະສິກອນເຂົ້າມາມີສ່ວນຮ່ວມນໍາ

ຄອນຕິເນັນເທິລ ພິຈາລະນາການເຂົ້າໃຈວິທີປະຕິບັດພ້ອມກັບຕ່ອງໂສ້ມູນຄ່າ, ໂດຍສະເພາະແມ່ນການທອນກະແສທີ່ເປັນອົງປະກອບຫຼັກໃນການຍູ້ແຮງວິທີປະຕິບັດແບບຍືນຍົງທັງດ້ານສິ່ງແວດລ້ອມ ແລະ ສັງຄົມ. ຄອນຕິເນັນເທິລຈະທົບທວນ, ຂະຫຍາຍ ແລະ ປັບປຸງວິທີການຢ່າງຕໍ່ເນື່ອງ ລວມທັງຄົ້ນຄ້ວາ ແລະ ທົດສອບທາງເລືອກສຳລັບການກຳນົດຄວາມສ່ຽງທີ່ອາດເກີດຂຶ້ນໄດ້ ແລະ ການທອນກະແສຜົນກະທົບທາງລົບ. ດັ່ງນັ້ນ, ພວກເຮົາໄດ້ນຳເອົາ
ບັນດາຂໍ້ລິເລີ່ມ, ໂຄງການ ແລະ ກິດຈະກຳຕ່າງໆເຂົ້າມາເພື່ອກຳນົດ ແລະ ເຮັດວຽກຕາມແນວທາງແກ້ໄຂເພື່ອປັບປຸງສະພາບການອຸດສະຫະກຳໃນປະຈຸບັນ.
ພວກເຮົາສົ່ງເສີມ ແລະ ສະໜັບສະໜູນໂຄງການ ແລະ ຂໍ້ລິເລີ່ມຕ່າງໆທີ່ປະຕິບັດໂດຍຄູ່ຮ່ວມມືໄວ້ວາງໃຈໄດ້ທີ່ແນໃສ່ການໃຫ້ການສຶກສາແກ່ຊາວກະສິກອນບົນພື້ນຖານການປູກຢາງທຳມະຊາດຢ່າງມີຄວາມຮັບຜິດຊອບ ແລະ ມີປະສິດທິຜົນ. ດັ່ງນັ້ນ, ພວກເຮົາຕັ້ງໜ້າຊອກຫາເປັນຄູ່ຮ່ວມ
ກັບສະຖາບັນ ຂອງລັດ, ອົງການບໍ່ຂຶ້ນກັບລັດຖະບານ ລວມທັງຄູ່ຮ່ວມທຸລະກິດທາງກົງ ຫຼື ທາງອ້ອມ ແລະ ແວດວົງອຸດສະຫະກຳເພື່ອຊ່ວຍພັດທະນາຊາວກະສິກອນປູກຢາງທຳມະຊາດໃນການໃຊ້ວິທີຜະລິດກະສິກຳທີ່ດີທີ່ສຸດ.
ເຊິ່ງເປັນຄວາມເຊື່ອ ຂອງພວກເຮົາທີ່ວ່າ ການປັງປຸງທີ່ເກີດຂຶ້ນໃນຄຸນນະພາບ ແລະ ຜະລິດຕະຜົນຢາງ ຈະເຮັດໃຫ້ລາຍຮັບ ແລະ ການດຳລົງຊີວິດ ຂອງຊາວກະສິກອນເພີ່ມຂຶ້ນ.
ໂດຍການຮ່ວມມືກັບຄູ່ຮ່ວມ, ພວກເຮົາໄດ້ເລີ່ມຕົ້ນໂຄງການທົດລອງຢູ່ໃນປະເທດອິນໂດເນເຊຍເພື່ອປັບປຸງຄວາມຍືນຍົງຂອງຕ່ອງໂສ້ການສະໜອງຢາງທຳມະຊາດ. ໂດຍການເປັນຄູ່ຮ່ວມກັບຜູ້ສະໜອງທ້ອງຖິ່ນ, ຈຸດປະສົງແມ່ນເພື່ອພັດທະນາລາຍການເກນມາດຕະຖານສຳລັບການຜະລິດຢາງທຳມະຊາດແບບຍືນຍົງ,
ເພື່ອຝຶກອົບຮົມຊາວກະສິກອນກ່ຽວກັບການຜະລິດແບບຍືນຍົງຕາມເກນມາດຕະຖານເຫຼົ່ານີ້ ແລະ ເພື່ອຕິດຕາມຢາງທຳມະຊາດຈາກຜູ້ຖືຄອງການຜະລິດລາຍນ້ອຍຢູ່ທີ່ ຄອນຕິເນັນເທິລ. ການບົດຮຽນຈາກໂຄງການເຫຼົ່ານີ້ຈະຖືກນຳໃຊ້ສຳລັບວຽກເພີ່ມເຕີມກັບບັນດາຜູ້ສະໜອງ.

## 2.2 ການມີສ່ວນຮ່ວມ ຂອງຜູ້ມີສ່ວນກ່ຽວຂ້ອງ.

ຄອນຕິເນັນເທິລ ໝາຍໝັ້ນຕັ້ງໃຈໃນການມີສ່ວນຮ່ວມຢ່າງແຮງກ້າ ແລະ ການສົນທະນາກັບຜູ້ມີສ່ວນກ່ຽວຂ້ອງພາຍໃນ ແລະ ຕ່າງໆປະເທດຕາມຕ່ອງໂສ້ມູນຄ່າຢາງທຳມະຊາດ (cf. ພາກທີ 3). ພວກເຮົາມີສ່ວນຮ່ວມໃນເວລາອຸດສະຫະກຳເພື່ອພັດທະນາ ຕົກລົງເອົາຄຳແນະນຳ ແລະ ຫຼັກການກ່ຽວກັບຢາທຳມະຊາດແບບຍືນຍົງ. ດັ່ງນັ້ນ, ພວກເຮົາມີສ່ວນຮ່ວມໃນ ໂຄງການ ອຸດສະຫະກຳກັບຜູ້ຜະລິດທັງໝົດເພື່ອກຳນົດຂອບວຽກທີ່ເຂັ້ມແຂງພ້ອມມາດຕະຖານແນໃສ່ເພື່ອຮັບປະກັນການປະຕິບັດການຈັດຫາແຫຼ່ງຊັບພະຍາກອນແບບຍືນຍົງໃນທົ່ວໂລກ. ໃນຖານະເປັນສ່ວນໜຶ່ງ ຂອງໂຄງການອຸດສະຫະກຳຢາງຕົ້ນລົດດັ່ງກ່າວ, ພວກເຮົາວາງແຜນທີ່ຈະປະກອບສ່ວນໃນການພັດທະນາແນວຄວາມຄິດການຟື້ນຟູລະບົບນິເວດວິທະຍາທີ່ໄດ້ຮັບຄວາມເສຍຫາຍເນື່ອງຈາກ
ການປະຕິບັດງານທີ່ບໍ່ຍືນຍົງກ່ຽວກັບທຸະລກິດຢາງທຳມະຊາດ.

## 2.3 ການເພີ່ມຂຶ້ນໃນຄວາມສາມາດການສືບມາດຕະຖານ

ເຮັດໃຫ້ຄວາມຊັບຊ້ອນ
ຂອງຕ່ອງໂສ້ອຸປະທານຢາງທຳມະຊາດເນື່ອງຈາກການແຕກກະຈາຍທີ່ອີງໃສ່ຈຳນວນຊາວກະສິກອນລາຍນ້ອຍທີ່ມີຫຼາຍ,
ຄອນຕິເນັນເທິລ ຮັບຮູ້ສິ່ງທ້າທາຍປະຈຸບັນຕໍ່ການບັນລຸ
ຄວາມສາມາດໃນການສືບມາດຕະຖານແບບເຕັມສ່ວນຕາມຕ່ອງໂສ້ມູນຄ່າທັງໝົດ. ເຖິງຢ່າງໃດກໍ່ຕາມ ພວກເຮົາມຸ່ງໝັ້ນທີ່ຈະມີສ່ວນຮ່ວມ ແລະ ຮັບປະກັນການມີສ່ວນຮ່ວມຈາກຄູ່ຮ່ວມທຸລະກິດຂອງພວກເຮົາໃນຄວາມພະຍາຍາມອັນນີ້, ສ້າງຂະບວນການກວດສອບ ແລະ ການພິສູດຢັ້ງຢືນ
ພ້ອມເກນມາດຕະຖານທີ່ຊັດເຈນທີ່ມີອິດທິພົນຕໍ່ການຕັດສິນໃຈ ແລະ ຍຸດທະສາດການຈັດຫາແຫຼ່ງຊັບພະຍາກອນ. ຄອນຕິເນັນເທິລຕັ້ງເປົ້າໝາຍທີ່ຈະບັນລຸຄວາມສາມາດໃນການສືບມາດຕະຖານແບບເຕັມສ່ວນກ່ຽວກັບຢາງຈາກສວນປູກ
ການສືບມາດຕະຖານສຳລັບຕ່ອງໂສ້ອຸປະທານຜູ້ຖືຮຸ້ນລາຍນ້ອຍທີ່ສັບສົນຜ່ານວິທີການໂດຍອີງໃສ່ຄວາມສ່ຽງ.

## 2.4 ການປະຢັດຊັບພະຍາກອນ

ພວກເຮົາມີຈຸດປະສົງເພື່ອອະນຸລັກຊັບພະຍາກອນຜ່ານກິດຈະກຳການຄົ້ນຄ້ວາ ແລະ ການພັດທະນາທີ່ວາງເປົ້າໝາຍຂະຫຍາຍການຜະລິດຕະຫຼອດຊີວິດ ເຊັ່ນ: ໂດຍການປັບປຸງຄຸນສົມບັດຢາງຕ້ານການຮຸກຖູ ຫຼື ການບໍລິການສຳລັບລູກຄ້າ ຂອງພວກເຮົາ
ໃນການດຳເນີນການສິນຄ້າພາຍໃຕ້ເງື່ອນໄຂດີທີ່ສຸດ. ນອກຈາກນີ້, ໄດ້ບັນລຸການບໍລິໂພກຢາງທຳມະຊາດທີ່ຫຼຸດລົງໂດຍການອອກແບບຜະລິດຕະພັນແບບຊານສະຫຼາດ ເຊັ່ນ: ຫຼຸດຜ່ອນມວນສານທັງໝົດ. ໃນຂັ້ນຕອນການຜະລິດ ຂອງພວກເຮົາ ພວກເຮົາແນໃສ່
ເພື່ອຫຼຸດຜ່ອນຈຳນວນສິ່ງເສດເຫຼືອ ແລະ ພັດທະນາຂະບວນການເພື່ອນຳເອົາສິ່ງເສດເຫຼືອນັ້ນກັບມາໃຊ້ຄືນຢ່າງຕໍ່ເນື່ອງ.

### 2.5 ການນຳກັບມາໃຊ້ໃໝ່

ພວກເຮົາໄດ້ພັດທະນາຫຼາຍຂະບວນການນຳກັບມາໃຊ້ໃໝ່, ຈາກການນຳໃຊ້ ແລະ ການຜະລິດ ການນຳກັບມາໃຊ້ໃໝ່ ເພື່ອໃຫ້ນຳກັບມາໃຊ້ຄືນ ຂອງວັດສະດຸຜະລິດເກີນ. ປະຈຸບັນ ໂຮງງານ ContiLifeCycle ແມ່ນຕົວຢ່າງ ໂຮງງານຜະລິດໃນທົ່ວໂລກທີ່ຮອບຮອມເອົາການນຳມາກັບໃຊ້ຄືນ ແລະ ການສ້ອມແຊມຢາງລົດໃນບ່ອນດຽວ ດັ່ງນັ້ນຈຶ່ງເປັນການສ້າງເກນມາດຕະຖານໃໝ່ໃນຄວາມຍືນຍົງ. ພວກເຮົາແນໃສ່ຂະຫຍາຍອັດຕາສ່ວນຮ້ອຍ ຂອງວັດສະດຸທີ່ນຳກັບມາໃຊ້ໃໝ່ ຂອງພກວເຮົາທີ່ໃຊ້ໃນການຜະລິດ.

### 2.6 ການກຳນົດແຫຼ່ງອຸປະທານຢາງທຳມະຊາດທາງເລືອກ.

ເພື່ອຄອບຄຸມການເຕີບໂຕໃນອະນາຄົດທີ່ຄາດໄວ້ໃນອຸປະທານຢາງທຳມະຊາດ, ພວກເຮົາດຳເນີນໂຄງການຄົ້ນຄ້ວາກັບຄູ່ຮ່ວມພາຍນອກສຳລັບ Taraxagum® ຢາງຈາກພືດປະເພດໃບຫຍິກສີເຫຼືອງ (dandelion)ລັດເຊຍ. ພືດປະເພດ Dandelions ລັດເຊຍຍັງສາມາດປູກໃນຂົງເຂດປານກາງໂດຍໃຊ້ດິນກະສິກຳທີ່ມີຢູ່ ແລະ ຊ່ວຍຫຼຸດຜ່ອນໄລຍະທາງທີ່ວັດຖຸດິບຈຳຕ້ອງເດີນທາງໄປຫາບາງພື້ນທີ່ຜະລິດລັກ ຂອງພວກເຮົາ. ນອກຈາກນີ້, ພື້ນປະເພດ Dandelionsຍັງສາມາດປັບປ່ຽນສະພາບຕອບໂຕ້ກັບການປ່ຽນແປງຂອງສະພາບອຸປະທານຢາງທຳມະຊາດ ເນື່ອງຈາກພື້ນທີ່ປູກອາດປ່ຽນແປງໄດ້ໃນແຕ່ລະປີ.

## 3. ຫຼັກການລັດຫາຊັບພະຍາກອນທົ່ວໄປ – ຄວາມຕ້ອງການ ຂອງຜູ້ສະໜອງ

ຄອນຕິເນັນເທີລ ຕ້ອງການພະນັກງານ ແລະ ຄູ່ຮ່ວມຕ່ອງໂສ້ອຸປະທານ ເພື່ອດຳເນີນການຢ່າງມີຈັນຍາບັນ ແລະ ປະຕິບັດລະບຽບກົດໝາຍ. ພວກເຮົາຕໍ່ຕ້ານການສໍ້ລາດບັງຫຼວງ ແລະ ການໃຫ້ສິນບົນທຸກຮູບແບບ. ພວກເຮົາຕ້ອງການຢາກໃຫ້ຜູ້ສະໜອງໂດຍກົງ ຂອງພວກເຮົາ (ຄູ່ຮ່ວມທຸລະກິດ) ປະຕິບັດຕາມຫຼັກ BPCoC ຂອງພວກເຮົາ. ນອກຈາກນີ້, ພວກເຮົາຫວັງວ່າ ຄູ່ຮ່ວມທຸລະກິດເຫຼົ່ານີ້ຈະມີສ່ວນຮ່ວມໃນຕ່ອງໂສ້ອຸປະທານເພື່ອສົ່ງເສີມການປະຕິບັດຕາມຫຼັກປະຕິບັດການເປັນຄູ່ຮ່ວມທູລະກິດ ດັ່ງກ່າວ. ເພື່ອຮັບປະກັນຄວາມກ່ຽວຂ້ອງ ແລະ ຄວາມປະສິດທິພາບ, ພວກເຮົາເຊື່ອວ່າມັນເປັນສິ່ງສຳຄັນທີ່ ຜູ້ມີສ່ວຮ່ວມທັງໝົດໃນຕ່ອງໂສ້ມູນຄ່າຮັບຮູ້ ແລະ ເຂົ້າຮ່ວມໃນຄວາມພະຍາຍາມທີ່ຈຳສຳລັບການປະຕິບັດທີ່ຍືນຍົງພາຍສໃນອຸດສະຫະກຳ. ບັນດາຜູ້ມີສ່ວນຮ່ວມທີ່ໄດ້ກ່າວເຖິງຂ້າງເທິງນັ້ນປະຕິບັດການພາຍໃນຈຸດກະແສຕາມຕ່ອງໂສ້ມູນຄ່າທີ່ຈັດໝວດໝູ່ພາຍໃຕ້ໜຶ່ງ ຫຼື ຫຼາຍກຸ່ມຜູ້ມີສ່ວນກ່ຽວຂ້ອງດັ່ງນີ້:

ການທອນກະແສ:

› ຜູ້ຜະລິດ, ລວມທັງບຸກຄົນ ຫຼື ບໍລິສັດທີ່ເຮັດການເກັບກູ້ຕົ້ນຢາງ. ເຊິ່ງປະມານການຢູ່ທີ່ປະມານ 85% ຂອງພື້ນທີ່ຕົ້ນຢາງທົ່ວໂລກແມ່ນຊາວກະສິກອນລາຍນ້ອຍເປັນເຈົ້າຂອງ ເຊິ່ງຖືກຮຽກວ່າ ຜູ້ຖືຄອງລາຍນ້ອຍ.
› ຜູ້ຈຳໜ່າຍ ຫຼື ຄົນກາງ, ລວມມີຜູ້ທີ່ມີສ່ວນຮ່ວມເຊິ່ງເປັນຜູ້ທີ່ເກັບ, ຈັດຊື້ ແລະ ຄ້າຂາຍຢາງທຳມະຊາດລະຫວ່າງຜູ້ຜະລິດ ແລະ ຜູ້ປຸງແຕ່ງຢາງ. ອີງຕາມຂົງເຂດ ແລະ ປະເທດ, ພໍ່ຄ້າປະຕິບັດວຽກແກ່ຍາວຕາມສະພາບຫຼາກຫຼາຍລະດັບ.
› ຜູ້ປຸງແຕ່ງຢາງ, ລວມມີໂຮງງານຕ່າງໆທີ່ຈັດຊື້ຢາງໂດຍກົງຈາກຜູ້ຜະລິດ ຫຼື ຜູ້ຈຳໜ່າຍເປັນວັດຖຸດິບເພື່ອນຳເອົາມາປຸງແຕ່ງເປັນຢາງທຳມະຊາດເພື່ອການນຳໃຊ້ສະເພາະໃນຂົງເຂດການຜະລິດສິນຄ້າໃນອຸດສະຫະກຳຕ່າງໆ.
› ພໍ່ຄ້າ, ລວມມີນາຍໜ້າຄ້າຢາງທຳມຊາດສຳເລັດຮູບລະຫວ່າງຜູ້ປຸງແຕ່ງຢາງ ແລະ ຜູ້ຜະລິດຢາງເປັນສິນຄ້າ.

ກາງກະແສ:

› ຜູ້ຜະລິດຢ່າງເປັນສິນຄ້າລວມມີ ບໍລິສັດຕ່າງໆທີ່ປຸງແຕ່ງຢາງທຳມະຊາດເປັນສິນຄ້າສຳເລັດຮູບ ຫຼື ເຄິ່ງສຳເລັດຮູບ.

ກະແສລຸ່ມ:

› ລູກຄ້າ, ລວມມີ ຜູ້ນຳໃຊ້ສິນຄ້າສຳເລັດຮູບ ຫຼື ເຄິ່ງສຳເລັດຮູບທີ່ຜະລິດໂດຍຜູ້ຜະລິດຢາງເປັນສິນຄ້າທີ່ກ່າວໄວ້ຂ້າງເທິງນັ້ນ. ຍ້ອນວ່າ ຄອນຕິເນັນເທີລ ໄດ້ຖືກວາງໃນຕຳແໜ່ງ ກາງກະແສ ໃນຕ່ອງໂສ້ອຸປະທານ.

## 4. ບັນດາຫຼັກການດ້ານສິ່ງແວດລ້ອມ

ໃນຖານະເປັນບໍລິສັດທີ່ມີຄວາມຮັບຜິດຊອບ, ຄອນຕິເນັນເທີລ ຕັ້ງໃຈເຮັດວຽກກັບຄູ່ຮ່ວມທຸລະກິດ ຂອງພວກເຮົາໃນການປົກປັກຮັກສາສິ່ງແວດລ້ອມ. ການປົກປັກຮັກສາປ່າໄມ້ແມ່ນມີຄວາມສຳຄັນເພື່ອຫຼຸດຜ່ອນການປ່ຽນແປງຂອງສະພາບດິນຟ້າອາກາດ, ອະນຸລັກຊີວະນາງພັນ ແລະ ຮັບປະກັນການສະໜອງນໍ້າສະອາດ. ຄອນຕິເນັນເທີລສະໜັບສະໜູນກິດຈະກຳທີ່ແນໃສ່ການບໍ່ຕັດໄມ້ທຳລາຍປ່າ. ພວກເຮົາຄາດຫວັງໃຫ້ບັນດາຜູ້ສະໜອງ ຂອງພວກເຮົາຍັ້ງຢືນທີ່ມາຂອງວັດຖຸດິບເພື່ອຮັບປະກັນການປະຕິບັດຕາມຫຼັກການ ຂອງພວກເຮົາ ແລະ ຊຸກຍູ້ໃຫ້ເຂົາເຈົ້າສົ່ງເສີມວິທີການປະຕິບັດດ້ານກະສິກຳທີ່ດີເຂົ້າໃນການປູກຢາງ.

ການຂາດແຄນນ້ຳກຳລັງເປັນບັນຫາສຳຄັນທີ່ເພີ່ມຂຶ້ນເລື້ອຍໆ. ດັ່ງນັ້ນ, ພວກເຮົາຄາດຫວັງໃຫ້ບັນດາຜູ້ສະໜອງໂດຍກົງຂອງພວກເຮົາດຳເນີນ ແລະ ສົ່ງເສີມໂຄງການລິເລີ່ມໃນການປະຢັດນ້ຳ ແລະ ນຳກັບມາໃຊ້ໃໝ່ເພື່ອຫຼຸດຜ່ອນການບໍລິໂພກນ້ຳ. ຍິ່ງໄປກວ່ານັ້ນ,
ຊັບພະຍາກອນທັງໝົດທີ່ໄດ້ລົງທຶນໃນການປຸງແຕ່ງຢາງຕ້ອງໄດ້ຮັບການຄຸ້ມຄອງຢ່າງມີປະສິດທິຜົນ ແລະ ສິ່ງເສດເຫຼືອຈາກການປຸງແຕ່ງນີ້ຕ້ອງຖືກຈັດຖິ້ມຢ່າງມີຄວາມຮັບຜິດຊອບ ແລະ ປະຕິບັດຕາມລະບຽບກົດໝາຍທີ່ກ່ຽວຂ້ອງ.
ຄູ່ຮ່ວມທຸລະກິດຕ້ອງຮັບປະກັນວ່າໄດ້ປະຕິບັດຫຼັກການຕໍ່ໄປນີ້ໃນການດຳເນີນງານ ຂອງຕົນ ແລະ ໄດ້ຮັບການຄາດຫວັງໃນການປະຕິບັດຫຼັກການໃນທົ່ວຕ່ອງໂສ້ມູນຄ່າ:

› ການປົກປັກຮັກສາ ເຂດພື້ນທີ່ປ່າໄມ້ທີ່ມີການສະສົມທາດກາກບອນສູງ.
› ການປົກປັກຮັກສາ ພື້ນທີ່ຄວນຄ່າແກ່ການອະນຸລັກສູງ ລວມມີເຂດທີ່ບໍ່ແມ່ນປ່າທີ່ມີຄຸນຄ່າທາງວັດທະນະທຳ-ສັງຄົມສູງ.
› ການອະນຸລັກຊີວະນາງພັນ
› ການປົກປັກຮັກສາພື້ນທີ່ປ່າພຸ ໂດຍບໍ່ຄຳນຶງເຖິງຄວາມເລິກ.
› ຫ້າມນຳໃຊ້ການຈູດໃນການກະກຽມການປູກໃໝ່, ການປູກຄືນ ຫຼື ການພັດທະນາອື່ນໆໃດໜຶ່ງ.
› ການນຳໃຊ້ນ້ຳໃນການປຸງແຕ່ງມີປະສິດທິຜົນ ແລະ ການປົກປ້ອງຊັບພະຍາກອນນ້ຳຈືດ.

## 5. ຫຼັກການທາງສັງຄົມ

ຄອນຕິເນັນເທົລ ຕັ້ງໃຈທີ່ຈະເຄົາລົບ ແລະ ສົ່ງເສີມສິດທິມະນຸດ, ຮັບຮອງເອົາວິທີການປະຕິບັດທີ່ດີທີ່ສຸດທີ່ເປັນໄປໄດ້ ແລະ ຫຼຸດຜ່ອນຜົນກະທົບດ້ານລົບທີ່ອາດເກີດມີຂຶ້ນໃນການຈັດຕັ້ງປະຕິບັດທຸລະກິດ ຂອງຕົນ
ຕາມທີ່ກຳນົດໄວ້ໃນຫຼັກການຊີ້ນຳດ້ານທຸລະກິດ ແລະ ສິດທິມະນຸດ ຂອງອົງການສະຫະປະຊາຊາດ (UNGP).

### 5.1 ເຄົາລົບສິດຖືຄອງທີ່ດິນ ແລະ ການແກ້ໄຂຂໍ້ຂັດແຍ່ງ

ຄອນຕິເນັນເທົລ ຮັບຮູ້ ແລະ ເຄົາລົບການມີຢູ່ຂອງສິດນຳໃຊ້ ຫຼື ສິດຕາມປະເພນີ ແລະ ສິດຕ່າງໆທີ່ກ່ຽວຂ້ອງຈາກຊຸມຊົນທ້ອງຖິ່ນ ແລະ ບຸກຄົນ ລວມເຖິງລະບຽບກົດໝາຍຂອງຊາດທີ່ກ່ຽວຂ້ອງໃດໜຶ່ງກ່ຽວກັບການນຳໃຊ້ທີ່ດິນ. ຄອນຕິເນັນເທົລ ຕ້ອງບໍ່ປະກອບສ່ວນບໍ່ວ່າທາງກົງ ຫຼື ທາງອ້ອມເຂົ້າໃນບັນດາການກະທຳທີ່ນຳໄປສູ່ການຄອບຄອງທີ່ດິນໂດຍບໍ່ຊອບທຳ
ເຊິ່ງນຳໄປສູ່ການສ້າງຄວາມເສຍຫາຍແກ່ຊຸມຊົນທ້ອງຖິ່ນ. ໂດຍສອດຄ່ອງກັບຄວາມຕັ້ງໃຈນີ້, ຄອນຕິເນັນເທົລ ຕ້ອງການໃຫ້ຜູ້ມີສ່ວນຮ່ວມໃນຕ່ອງໂສ້ອຸປະທານຢາງທຳມຊາດ ຂອງຕົນ, ຈັດຕັ້ງການດຳເນີນງານ ແລະ/ຫຼື ປັບປຸງນວິທີການປູກ ແລະ/ຫຼື ພື້ນທີ່ອຸດສະຫະກຳເພື່ອນຳເອົາຊຸມຊົນທ້ອງຖິ່ນເຂົ້າມາມີສ່ວນຮ່ວມເພື່ອເປັນການເຄົາລົບຫຼັກການຄວາມເຫັນດີຍິນຍອມບົນພື້ນຖານສະໝັກໃຈ, ກ່ອນລ່ວງໜ້າ ແລະ ໄດ້ຮັບຂໍ້ມູນຄົບຖ້ວນ (FPIC) ຕາມທີ່ ອົງການສະຫະປະຊາຊາດວ່າດ້ວຍການຫຼຸດຜ່ອນອາຍເຮືອນແກ້ວຈາກການຕັດໄມ້ທຳລາຍປ່າ ແລະ ຄວາມເຊື່ອມໂຊມ ຂອງປ່າໄມ້ ຫຼື UN-REDDກຳນົດໄວ້.

ນອກຈາກທີ່ກ້າວມາຂ້າງເທິງແລ້ວ,
ຄອນຕິເນັນທົລຕ້ອງການໃຫ້ຄູ່ຮ່ວມທຸລະກິດຕ້ອງຮັບປະກັນວ່າໄດ້ປະຕິບັດຫຼັກການຕໍ່ໄປນີ້ໃນການດຳເນີນງານ ຂອງຕົນ ແລະ ໄດ້ຮັບການຄາດຫວັງໃນການປະຕິບັດຫຼັກການໃນທົ່ວຕ່ອງໂສ້ມູນຄ່າ:
› ເຄົາລົບສິດຖືກຄອງທີ່ດິນ ຂອງປະຊາຊົນ ລວມທັງຮັບປະກັນການເຂົ້າເຖິງທີ່ດິນ ແລະ ການຜະລິດກະສິກຳ,
› ອະນຸຍາດໃຫ້ເຂົ້າເຖິງທີ່ດິນ ແລະ ການຜະລິດ,
› ຄັດຄ້ານ ແລະ ຫຼີກລ້ຽງວິທີການຍຶດຄອງທີ່ດິນ ຫຼື ການເຂົ້າໄປໂດຍປາສະຈາກຂໍ້ຍົກເວັ້ນ,
› ແລະ ໃຫ້ການຊົດເຊີຍທີ່ເປັນທຳແກ່ບັນດາຊຸມຊົນທ້ອງຖິ່ນເພື່ອເຮັດໃຫ້ການນຳໃຊ້ມາດຕະການອະນຸລັກ ແລະ/ຫຼື ການນຳໃຊ້ທີ່ດິນເພື່ອການຄ້ານັ້ນດຳເນີນໄປໄດ້.

### 5.2 ປັບປຸງເງື່ອນໄຂສະພາບການເຮັດວຽກ

ພວກເຮົາຕ້ອງການໃຫ້ຜູ້ມີສ່ວນຮ່ວມທັງມົດ ຂອງຕ່ອງໂສ້ອຸປະທານທວນກະແສຢາງທຳມະຊາດໂດຍສະເພາະແມ່ນຄູ່ຮ່ວມທຸລະກິດໂດຍກົງ ຂອງພວກເຮົາ ລວມທັງສວນຢາງອຸດສະຫະກຳຕ່າງໆ ປະຕິບັດຕາມຫຼັກການ ແລະ ສິດທິພື້ນຖານໃນບ່ອນເຮັດວຽກ ຂອງອົງການແຮງງານສາກົນ (ILO)ເຊິ່ງລວມມີ:
› ສິດກ່ຽວກັບອິດສະຫຼະພາບໃນໂຮມຊຸມນຸມ ແລະ ການຮັບຮູ້ສິດໃນການເຈລະຈາຕໍ່ລອງແບບລວມໝູ່ (ILO C87 & C98).
› ການບໍ່ອົດກັ້ນຕໍ່ການກົດຂີ່, ຜູກມັດ ຫຼື ບັງຄັງແຮງງານທຸກຮູບແບບ (ILO C29 & 105).
› ການບໍ່ອົດກັ້ນຕໍ່ການໃຊ້ແຮງງານເດັກທຸກຮູບແບບ. ບັນດາຜູ້ສະໜອງຕ້ອງປະຕິບັດຕາມລະບຽບກົດໝາຍວ່າດ້ວຍແຮງງານຕາມເກນອາຍຸຂັ້ນຕ່ຳທີ່ຖືກຕ້ອງຕາມກົດໝາຍ

ສໍາລັບທ້ອງຖິ່ນ ພວກເຂົາ. ໃນກໍລະນີທີ່ບໍ່ມີລະບຽບກົດໝາຍທ້ອງຖິ່ນ, ບັນດາຜູ້ສະໜອງຈະບໍ່ວ່າຈ້າງເດັກນ້ອຍທີ່ມີອາຍຸຕໍ່າກວ່າ 1□5 ປີ. ຖ້າຫາກລະບຽບກົດໝາຍກ່ຽວກັບເກນອາຍຸເຮັດວຽກຕໍ່າສຸດ ຂອງທ້ອງຖິ່ນກໍານົດໄວ້ຢູ່ຕໍ່າກວ່າ 15 ປີ, ການວ່າຈ້າງຕ້ອງສອດຄ່ອງກັບເງື່ອນໄຂ ຂອງອົງການແຮງງານສາກົນ (ILO C138 & C182).

› ຫຼີກລ້ຽງການເລືອກປະຕິບັດທຸກຮູບແບບບົນພື້ນຖານເພດ, ອາຍຸ, ຊົນເຜົ່າ, ຄວາມບ່ຽງເບນທາງເພດ, ສັດທາຄວາມເຊື່ອ, ຊາດກໍາເນີດ ຫຼື ຄວາມພິການ (ILO C100 & C111). ນອກຈາກນີ້, ພວກເຮົາຫວັງໃຫ້ຄູ່ຮ່ວມທູລະກິດ ແລະ ການປູກພື້ນອຸດສະຫະກໍາຕ່າງໆໃຫ້ສະໜອງເງື່ອນໄຂການເຮັດວຽກທີ່ເໝາະສົມຕໍ່ວິທີປະຕິບັດທີ່ດີທີ່ສຸດ ຂອງອຸດສະຫະກໍາ ລວມທັງ ແຕ່ບໍ່ຈໍາກັດພຽງແຕ່:

› ການເຮັດສັນຍາຈ້າງງານເປັນລາຍລັກອັກສອນ,

› ຄ່າຕອບແທນຢ່າງໜ້ອຍເທົ່າກັບເງິນເດືອນຂັ້ນຕໍ່າ ຂອງປະເທດດັ່ງກ່າວສໍາລັບໜ້າວຽກເທົ່າກັນ (ILO C131),

› ຮັບປະກັນຊົ່ວໂມງການເຮັດວຽກທີ່ເປັນທໍາ ແລະ ຮັກສາການບັນທຶກຊົ່ວໂມງເຮັດວຽກ ແລະ ຄ່າຈ້າງທີ່ໂປ່ງໃສ ແລະ ເຊື່ອຖືໄດ້ ສໍາລັບກໍາມະກອນທຸກຄົນ,

› ເຄົາລົບສິດທິຂອງກໍາມະກອນຜູ້ອົບພະຍົບ ແລະ ໂດຍສະເພາະແມ່ນນໍາໃຊ້ວິທີການບັນຈຸພະນັກງານທີ່ມີຈັນຍາທໍາ ລວມທັງບໍ່ມີການເກັບຄ່າບັນຈຸພະນັກງານບໍ່ວ່າທາງກົງ ຫຼື ທາງອ້ອມນໍາກໍາມະກອນ,

› ການຮັບເອົາມາດຕະຖານທີ່ຖືກຕ້ອງກ່ຽວກັບການປ້ອງກັນ, ການປະເມີນ ແລະ ການຄຸ້ມຄອງສຸຂະພາບທາງອາຊີບ ແລະ ຄວາມສ່ຽງດ້ານຄວາມປອດໄພ,

› ການຈັດຕັ້ງປະຕິບັດນະໂຍບາຍການປ້ອງກັນ ແລະ ການໄກ່ແກ້ການຄຸກຄາມ ແລະ ການລະເມີດທຸກຮູບແບບ.

## 6. ການຄຸ້ມຄອງບໍລິຫານ ແລະ ການຕິດຕາມ

### 6.1 ການຈັດຕັ້ງປະຕິບັດນະໂຍບາຍ

ຄອນຕິເນັນເທິລ ຕ້ອງການໃຫ້ຄູ່ຮ່ວມທູລກິດປະຕິບັດຕາມເນື້ອໃນທັງໝົດ ຂອງນະໂຍບາຍນີ້ໃນການຈັດຕັ້ງປະຕິບັດ ຂອງຕົນ ແລະ ຫວັງອີກວ່າພວກເຮົາຈະປະຕິບັດຫຼັກການເຫຼົ່ານີ້ໃນທົ່ວຕ່ອງໂສ້ມູນຄ່າ. ມັນມີຜົນສັກສິດນັບແຕ່ມື້ເຜີຍແຜ່. ການບໍ່ປະຕິບັດຕາມຄູ່ຮ່ວມທຸລະກິດຈະນໍາໄປສູ່ພັນທະການດໍາເນີນການປັບປຸງ.
ຖ້າຫາກວ່າການດໍາເນີນການປັບປຸງເຫຼົ່ານີ້ບໍ່ໄດ້ຮັບການປະຕິບັດໃຫ້ສໍາເລັດ ອາດສົ່ງຜົນຕໍ່
ການສິ້ນສຸດຄວາມສໍາພັນທາງທຸລະກິດ. ບອ່ນທີ່ມີຜົນກະທົບທາງລົບເກີດຈາກການບໍ່ປະບັດຕາມພັນທະ ພວກເຮົາແນໃສ່ເພື່ອປັບປຸງສະຖານະການ. ພ້ອມກັບຄູ່ຮ່ວມພາຍນອກ, ຄອນຕິເນັນເທິລຈະສືບຕໍ່ພັດທະນາການປະເມີນຂະບຫວນການຈັດຊື້ເພື່ອກໍານົດຄວາມສ່ຽງທີ່ອາດເກີດມີຂຶ້ນ ແລະ ຜົນກະທົບຕາມຕ່ອງໂສ້ອຸປະທານ. ພວກເຮົາມີສິດດໍາເນີນການຢ້ຽມຢາມພື້ນທີ່ຕາມຫຼັກປະຕິບັດ BPCoC ຂອງພວກເຮົາ.

ພວກເຮົາໄດ້ສ້າງຕັ້ງ ສາຍດ່ວນການປະຕິບັດພັນທະກົດໝາຍ ແລະ ການຕໍ່ຕ້ານການສໍ້ລາດບັງຫຼວງ ເພື່ອຮັບການລາຍງານທີ່ອາດມີຈາກບຸກຄົນໃດໜຶ່ງໂດຍກົງ ແລະ ບໍ່ອອກຊື່ກ່ຽວກັບການຮ້ອງຂໍຄວາມເປັນທໍາ,
ງການບໍ່ປະຕິບັດຕາມພັນທະ, ການກະທໍາທີ◌່ເປັນການສໍ້ໂກງ ແລະ
ການລະເມີດຫຼັກຈັນຍາບັນຕ່າງໆຕາມທີ່ກໍານົດໄວ້ໃນນະໂຍບາຍນີ້.

### 6.2 ການສື່ສານ

ນະໂຍບາຍນີ້ຈະມີໃຫ້ແກ່ຄູ່ຮ່ວມທຸລະກິດໂດຍກົງທັງໝົດໃນຕ່ອງໂສ້ອຸປະທານຢາງທະມະຊາດ.*
ພວກເຂົາຖືກຄາດຫວັງໃຫ້ປະຕິບັດນະໂຍບາຍນີ້ໃນຕ່ອງໂສ້ອຸປະທານທີ່ກ່ຽວຂ້ອງ ຂອງຕົນ. ນອກຈານີ້, ມັນຍັງຈະ
ມີໃຫ້ຜ່ານທາງເວັບໄຊ ຂອງຄອນຕິເນັນເທິລ. ຄອນຕິເນັນເທິລ ສະຫງວນສິດໃນການປັບປຸງ, ເພີ່ມເຕີມ ຫຼື ປ່ຽນແປງນະໂຍບາຍນີ້, ໄດ້ຕະຫຼອດເວລາທີ່ຈໍາເປັນ, ທິດທາງການຮຽນຮູ້ ແລະ ປະສົບການທີ່ໄດ້ຮັບ. ຈາກນະໂຍບາຍນີ້
ພວກເຮົາຈະຜັນຂະຫຍາຍທິດທາງພາຍໃນ ແລະ ຄໍາແນະນໍາການດໍາເນີນງານສໍາລັບການຈັດຕັ້ງປະຕິບັດນະໂຍບາຍດັ່ງກ່າວ. ພວກເຮົາແນໃສ່ລາຍງານຄວາມຄືບໜ້າການຈັດຕັ້ງປະຕິບັດໃນບົດລາຍຄວາມຍືນຍົງ ແລະ ເວັບໄຊ ຂອງພວກເຮົາເປັນປະຈໍາ.

**ບົດລ້ອນທ້າຍ**

› http://highcarbonstock.org/

› https://www.hcvnetwork.org/

ອົງການສະຫະປະຊາຊາດວ່າດ້ວຍການຫຼຸດຜ່ອນອາຍເຮືອນແກ້ວຈາກການຕັດໄມ້ທໍາລາຍປ່າ ແລະ ຄວາມເຊື່ອມໂຊມ ຂອງປ່າໄມ້ (UN-REDD)

› ສະມາຊິກ ແລະ ຂໍ້ລິເລີ່ມ

› ການຄຸ້ມຄອງບໍລິການກິດຈະການ

› ສາຍດ່ວນການປະຕິບັດພັນທະກົດໝາຍ ແລະ ການຕໍ່ຕ້ານການສໍ້ລາດບັງຫຼວງ

› ຫຼັກປະຕິບັດ

› ຫຼັກການປະຕິບັດ ຂອງຄູ່ຮ່ວມທາງທຸລະກິດ (BPCoC)
› ວິໄສທັດບໍລິສັດ ແລະ ພັນທະກິດ
› ຄ່ານິຍົມ
› ການບໍລິການ
› ການນຳກັບມາໃຊ້ຄືນ
› ການໃຊ້ງານຄືນ
› ໂຮງງານ ContiLifeCycle
› Taraxagum®
› ແຜນແມ່ບົດ 2020
› ບົດລາຍງານຄວາມຍືນຍົງ 2017
› ນະໂຍບາຍ ESH
›https://www.wbcsd.org/Sector-Projects/Tire-Industry-Project/News/Towards-a-stakeholder-led-platform-for-sustainable-natural-rubber
› ສາຍດ່ວນການປະຕິບັດພັນທະກິດໝາຍ ແລະ ການຕໍ່ຕ້ານການສໍ້ລາດບັງຫຼວງ

ການປະຕິເສດຄວາມຮັບຜິດຊອບ
ນະໂຍບາຍນີ້ໄດ້ຖືກສ້າງ ແລະ ອະນຸມັດເປັນພາສາອັງກິດ. ທຸກໆການແປແມ່ນແປມາຈາກພາສາອັງກິດທີ່ເປັນພາສາຕົ້ນສະບັບ. ໃນກໍລະນີມີຂໍ້ສົງໄສປະການໃດ ໃຫ້ອ້າງອີງເອົາສະບັບຕົ້ນເປັນຫຼັກ.